PHU BIA MINING – A MEMBER OF THE PANAUST GROUP OF COMPANIES

7th Floor | Capital Tower | 23 Singha Road | Saysetha District | PO Box 5559 | Vientiane Lao PDR
T: +856 21 268 000 | F: +856 21 268 029 | E: info@panaust.com.au | W: www.panaust.com.au

PHU BIA MINING

**MEDIA RELEASE**
30 September 2020

# ບໍລິສັດພູເບ້ຍ ມາຍນິງ ບໍລິຈາກອຸປະກອນເຄື່ອງມືການແພດ ໃຫ້ແກ່ແຂວງໄຊສົມບູນ

ໃນວັນທີ 29 ກັນຍາ, ບໍລິສັດ ພູເບ້ຍ ມາຍນິງ (PBM) ໄດ້ບໍລິຈາກເຄື່ອງຊ່ວຍຫາຍໃຈ ຈຳນວນ 2 ເຄື່ອງ, ເຄື່ອງປ້ຳເຂັມສັກຢາແບບອີເລັກໂທນິກ ຫຼື ຊີແລັງປັບນ້ຳແບບອີເລັກໂທນິກ ຈຳນວນ 3 ເຄື່ອງ ແລະ ຫຼອດເກັບຕົວຢ່າງເຊື້ອພະຍາດໂຄວິດ-19 ຂະໜາດກາງ ຈຳນວນ 100 ອັນ ໃຫ້ແກ່ ທ່ານ ແດງ ປະທຸມທອງ, ຮອງເຈົ້າແຂວງ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ແຂວງໄຊສົມບູນ.

ການບໍລິຈາກດັ່ງກ່າວເປັນສ່ວນຫນຶ່ງໃນການຊ່ວຍເຫຼືອ ຊຸດອຸປະກອນການແພດມູນຄ່າ US$ 100,000 ໂດລາສະຫະລັດ ທີ່ມອບກ່ອນໜ້າໃນ ເດືອນ ພຶດສະພາເພື່ອຊ່ວຍເຫຼືອແຂວງ ໄຊສົມບູນຕ້ານພະຍາດໂຄວິດ-19.

ທ່ານ ຈັນເພັງ ບຸນນະຜົນ, ປະທານ ບໍລິສັດ ພູເບ້ຍ ມາຍນິງ, ແລະ ທ່ານ ເດວິດ ຣິດ, ຜູ້ຈັດການໃຫຍ່ທົ່ວໄປ – ຝ່າຍດຳເນີນງານ, ຕາງໜ້າບໍລິສັດ ເປັນຜູ້ມອບອຸປະກອນການແພດດັ່ງກ່າວໃນພິທີມອບຮັບ ຊຶ່ງຈັດຂຶ້ນສະເພາະຢູ່ ຫ້ອງວ່າການແຂວງ ໄຊສົມບູນ.

ຕາງໜ້າບໍລິສັດ ຍັງໄດ້ພົບປະກັບ ທ່ານ ຄຳລຽງ ອຸທະໄກສອນ, ເຈົ້າແຂວງ ໄຊສົມບູນໃນລະຫວ່າງຮັບປະທານອາຫານທ່ຽງ.

ທ່ານ ຈັນເພັງ ບຸນນະຜົນ ໄດ້ກ່າວໃນນາມຄະນະຜູ້ບໍລິຫານຂອງບໍລິສັດພູເບ້ຍ ມາຍນິງ ກ່ຽວກັບສາຍພົວພັນທີ່ດີຂອງບໍລິສັດທີ່ມີຕໍ່ແຂວງໄຊສົມບູນ, ຊຸມຊົນໃກ້ຄຽງເຂດທີ່ບໍລິສັດເຂົ້າໄປດຳເນີນງານ ແລະ ລັດຖະບານວ່າ:

"ຢູ່ບໍລິສັດ ພູເບ້ຍ ມາຍນິງ, ການເຄົາລົບ ແລະ ຄວາມມຸ້ງໝັ້ນຕໍ່ກັບຊຸມຊົນ ທີ່ຢູ່ບໍລິເວນໃກ້ຄຽງເຂດບໍລິສັດ ດຳເນີນງານ ແມ່ນຄຸນນະທຳຫຼັກຂອງບໍລິສັດ. ເຊິ່ງບໍ່ພຽງແຕ່ເປັນການລົງທຶນ ໃນຊັບພະຍາກອນທາງການແພດໃຫ້ແກ່ແຂວງແລ້ວ ແຕ່ຍັງເປັນການລົງທຶນເຂົ້າໃນສຸຂະພາບ ແລະ ສະຫວັດດີພາບ ຂອງແຕ່ລະຄົນ ແລະ ຄອບຄົວອີກດ້ວຍ. ອຸປະກອນຊ່ວຍຊີວິດທາງການແພດນີ້ ຈະຊ່ວຍໃຫ້ແຂວງສາມາດເບິ່ງແຍ່ງປິ່ນປົວທີ່ຈຳເປັນຕໍ່ກັບຜູ້ທີ່ມີຄວາມຕ້ອງການຫຼາຍທີ່ສຸດ.

ທ່ານ ຈັນເພັງ ບຸນນະຜົນ ໄດ້ກ່າວຕື່ມວ່າ: "ພວກເຮົາຮູ້ສຶກຍິນດີທີ່ຈະໃຫ້ການສະໜັບສະໜູນແຂວງ ໃນການຈັດຫາອຸປະກອນບົ່ງມະຕິພະຍາດ ແລະ ປິ່ນປົວ ແລະ ປັບປຸງ ແນວທາງການປິ່ນປົວ ໃຫ້ປະຊາຊົນລາວໃນຊ່ວງໄລຍະທີ່ມີການລະບາດຂອງພະຍາດ ເຊິ່ງບໍ່ເຄີຍເກີດຂຶ້ນມາກ່ອນ,"

2019 WINNER
AUSTMINE MINER INNOVATION AWARD

2018 WINNER
FRIEND OF LAOS
2018 WINNER
FRIEND OF ASEAN AWARDS

2018 WINNER
ASEAN OSHNET EXCELLENCE AWARD
OHS MANAGEMENT

2017
LAO PDR LABOUR ORDER MEDAL
2011
LAO PDR LABOUR ORDER MEDAL CLASS 1
POVERTY REDUCTION

2015 WINNER
AUSTRALIAN CLIMATE LEADERSHIP AWARDS
MOST PROFITABLE CARBON REDUCTION ACTIVITY



*ຮູບເບື້ອງເທິງ: (ຊ້າຍ ຫາ ຂວາ) ທ່ານ ຈັນເພັງ ບຸນນະພົນ, ປະທານບໍລິສັດ ພູເບ້ຍ ມາຍນິງ, ທ່ານ ເດວິດ ຣິດ, ຜູ້ຈັດການໃຫຍ່ທົ່ວໄປ-ຝ່າຍດຳເນີນງານ ແລະ ຕາງໜ້າບໍລິສັດ ພູເບ້ຍ ມາຍນິງ ໄດ້ມອບອຸປະກອນການແພດເພີ້ມຕື່ມໃຫ້ ທ່ານ ແດງ ປະທຸມທອງ, ຮອງເຈົ້າແຂວງ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ-19 ແຂວງໄຊສົມບູນ ພ້ອມຕາງໜ້າຄະນະສະເພາະກິດຂອງແຂວງ ໄຊສົມບູນ.*

## ສຳລັບຂໍ້ມູນເພີ້ມເຕີມ ກະລຸນາຕິດຕໍ່:


ແກ້ວເລີດສະໄໝ ທຳມະລັງສີ
ໂທ: 020 268 000
ອີເມວ:
keoleutsamay.thammalangsy@pbm.panaust.com

ພົມວິຫານ ທຽບພົງພັນ
ໂທ: 021 268 000
ອີເມວ:
Phomvihane.Thiepphougphane@pbm.panaust.com